

ຊີໄຣ-ລາງວັນວັນນະກຳສ້າງສັນຍອດຢ້ຽມແຫ່ງອາຊຽນ ປະຈຳປີ 2004

THE S.E.A. WRITE AWARD

# ກະອິ ບ້ານນາ

ດຸທາລານສະທາອ້ນ

# THE S.E.A. WRITE AWARD

10 JUIL 2005



ຊີໄຣ-ລາງວັນນັກປະພັນສ້າງສັນຍອດຢ້ຽມແຫ່ງອາຊຽນ ປະຈຳປີ 2004

THE S.E.A. WRITE AWARD

# ກະອີ ບ້ານນາ



ກຸຫລາບສະຫວັນ

ຈັດພິມໂດຍ
ສຳນັກພິມອັບນະສິນ
2004

ຄະນະຈັດທຳ

ບັນນາທິການ:

ໄອທອງ ຄຳອິນຊູ

ສິນສະຫວັນ ເຄື່ອງເທພາລິດ

ເຕັກນິກການພິມ:

ນາງສີມພອນ ທຸມມາວົງ

ທອງເດືອນ ທຳມະວົງ

ອອກແບບໜ້າປົກ ແລະ ຮູບປະກອບ:

*BaiPo Book Design*

ພິມຄັ້ງທີ I ປີ 2004 ຈຳນວນ 1.000 ຫົວ

ພິມທີ່ໂຮງພິມແຫ່ງລັດ

ຕາມທະບຽນພິມ ເລກທີ 210 ພຈ/27072004

ສະຫງວນລິຂະສິດ

All Copyright

## ສາລະບານ


ຄຳເຫັນ ຂອງລັດຖະມົນຕີວ່າການ
ກະຊວງຖະແຫລງຂ່າວ ແລະ ວັດທະນະທຳ
ຄຳເຫັນ
ຂອງປະທານສະມາຄົມນັກປະພັນລາວ
ຄຳເຫັນ
ຄະນະກຳມະການຕັດສິນລາງວັນຊີໄຮ
ປະຈຳປີ 2004
ຄຳເຫັນ ຂອງ ດຣ. ທອງຄຳ ອ່ອນມະນີສອນ

1. ງົວກັບກວຽນ........................................ ໜ້າ 1
2. ບ້ານນາຜາສຸກ .................................. " 5
3. ສາຍເຊ ສາຍຊີວິດ.................................. " 7
4. ບົວຫລິງບຶງ ....................................... " 11
5. ລືມແລ້ວບໍບ້ານນາ ........................ " 15
6. ຝາກໃຈໄປເຖິງບ້ານນາ ................ " 19
7. ສາວບ້ານນາຍັງຄອຍ ................... " 23

8. ບ້ານນາຍັງຄອຍ .............................. " 27
9. ສະຫວັນບ້ານນາ .............................. " 29
10. ທົ່ງ ຫລື ກາ .............................. " 31
11. ສັນຍາເມື່ອນາປີ.............................. " 33
12. ບໍ່ລືມສັນຍາ .............................. " 37
13. ດອກ ຫຍ້າ ແລະ ປ່າເຂົ້າ .......... " 41
14. ທົວອິກສາວບ້ານນາ .............. " 45
15. ບ້ານນາແດນດົງ .................... " 49
16. ວັດກັບບ້ານ ........................ " 53
17. ສາລາບ້ານນາ ........................ " 57
18. ລົມຫນາວທີ່ບ້ານນາ ................ " 61
19. ກະວີບ້ານນາ .......................... " 63

# ຄະນະຮັບຜິດຊອບການຕັດສິນ
# ລາງວັນຊີໄຣຂອງລາວ ປະຈຳປີ 2004

* **ທີ່ປຶກສາກິຕິມະສັກ ແລະ ຊີ້ນຳ:**

ທ່ານ ພັນດວງຈິດ ວົງສາ

ລັດຖະມົນຕີວ່າການ ກະຊວງຖະແຫລງຂ່າວ ແລະ ວັດທະນະທຳ

* **ຄະນະທີ່ປຶກສາ:**

ທ່ານ ຈັນທີ ເດືອນສະຫວັນ

ທ່ານ ດຣ.ຈັນທະພິລິດ ຈຽມສີສຸຣາດ

ທ່ານ ສີວຽງແຂກ ກອນນີວົງ

ທ່ານ ໂສມສີ ເດຊາກຳພູ

ທ່ານ ຫນູໄຜ່ ກຸນລະວົງ

ທ່ານ ນາງ ກິ່ງເດືອນ ເນດຕະວົງ

* **ຄະນະກຳມະການຕັດສິນລາງວັນຊີໄຣ**

ທ່ານ ວິເສດ ສະແຫວງສຶກສາ

ທ່ານ ສຸຊີ ນໍຣະສິລປ໌

ທ່ານ ກະວິນ ກຽງຄຳຊິນນີ

ທ່ານ ສົມແສງ ໄຊຍະວົງ

ທ່ານ ອ່ອນສີ ປະຊາວົງ

ທ່ານ ຄຳຜຸຍ ໂພທິສານ

ທ່ານ ຊາຍຄຳ ຈຳປາອຸທຸມ

* **ຄະນະເລຂາ:**

ທ່ານ ສຸບັນ ຫລວງລາດ

ທ່ານ ທີ່ງເຫີນ ຊຸນພິທັກ

ທ່ານ ນາງ ສົມພອນ ທຸມມາວົງ

# ຄຳເຫັນ
## ຂອງທ່ານລັດຖະມົນຕີວ່າການ
## ກະຊວງຖະແຫລງຂ່າວ ແລະ ວັດທະນະທຳ

ລາງວັນຊີໄຣ ລາງວັນວັນນະກຳສ້າງສັນຍອດຢ້ຽມແຫ່ງອາຊຽນ ເປັນລາງວັນທີ່ມີຄຸນຄ່າ ແລະ ມີຄວາມໝາຍຍິ່ງສຳລັບນັກປະພັນຂອງບັນດາປະເທດສະມາຊິກສະມາຄົມປະຊາຊາດ ແຫ່ງອາຊີຕາເວັນອອກສຽງໃຕ້ ຫລື ASEAN. ລາງວັນດັ່ງກ່າວນີ້ ມີຈຸດປະສົງເພື່ອຊຸກຍູ້ສົ່ງເສີມ ແລະ ສ້າງສັນວົງການວັນນະກຳຂອງອາຊຽນ ແລະມອບໃຫ້ນັກປະພັນທີ່ມີຊື່ສຽງ ແລະ ຜົນງານທາງດ້ານບົດປະພັນວັນນະຄະດີຂອງປະເທດສະມາຊິກໃນທຸກໆປີ. ພາຍຫລັງທີ່ ສ.ປ.ປ ລາວໄດ້ເຂົ້າເປັນສະມາຊິກອາຊຽນ, ໃນຊຸມປີທີ່ຜ່ານມາ ຄືນັບແຕ່ປີ 1998 ເຖິງປະຈຸບັນ ກໍໄດ້ມີນັກປະພັນ ແລະ ນັກກະວີທີ່ມີຊື່ສຽງຂອງລາວໄດ້ຮັບລາງວັນຊີໄຣແລ້ວ 6 ທ່ານ. ນັບວ່າເປັນຂີດໝາຍ ແລະບາດກ້າວສຳຄັນສຳລັບປະຫວັດສາດໜ້າໃໝ່ ຂອງວົງການນັກປະພັນລາວ ໃນການເສີມຂະຫຍາຍມູນເຊື້ອວັນນະຄະດີລາວສູ່ສາຍຕານັກອ່ານໃນພາກພື້ນ ແລະ ໃນໂລກ.

ສຳລັບປີນີ້, **ທອງໃບ ໂພທິສານ** ນັກປະພັນ ນັກກະວີໜຸ່ມນ້ອຍ ແລະ ມີຜົນງານຂອງລາວອີກຜູ້ໜຶ່ງ ກໍຊະນະເລີດການແຂ່ງ

ຂັ້ນບົດກະວີໃນລະດັບຊາດ ແລະ ສາມາດຍາດໄດ້ລາງວັນຊີໄຣ ປະຈຳປີ 2004 ເຊິ່ງຖືເປັນການສ້າງກຽດ ແລະ ຊື່ສຽງໃຫ້ແກ່ປະເທດຊາດ ກໍຄືວົງການວັນນະຄະດີລາວເຮົາຢ່າງເປັນໜ້າພາກພູມໃຈຍິ່ງ.

ສະນັ້ນ, ໂອກາດນີ້ ໃນນາມລັດຖະມົນຕີວ່າການກະຊວງຖະແຫລງຂ່າວ ແລະ ວັດທະນະທຳ ຂ້າພະເຈົ້າຂໍສະແດງຄວາມຍ້ອງຍໍ ແລະ ຊົມເຊີຍ **ທອງໃບ ໂພທິສານ** ນັກກະວີຊີໄຣຂອງລາວ ປະຈຳປີ 2004 ມານະໂອກາດນີ້ດ້ວຍ.

*ນະຄອນຫລວງວຽງຈັນ, ວັນທີ 15 ກໍລະກົດ 2004*

ລັດຖະມົນຕີວ່າການ

ກະຊວງຖະແຫລງຂ່າວ ແລະ ວັດທະນະທຳ

ພັນດວງຈິດ ວົງສາ

# ຄຳເຫັນ
## ປະທານສະມາຄົມນັກປະພັນລາວ

ບົດກະວີ "ງົວ ກັບ ກວຽນ " ໃນປຶ້ມໂຮມຊຸດ ກະວີບ້ານນາ ຂອງ ທອງໃບ ໂພທິສານ ສ່ອງແສງໃຫ້ເຫັນເຖິງຊີວິດສັງຄົມຂອງຄົນລາວເຮົາແຕ່ກ່ອນກີ້ ທີ່ເຄີຍດຳລົງຊີວິດແບບທຳມະຊາດ ມີຄວາມສະຫງົບສຸກ ຢູ່ໃນສິນກິນ ໃນທຳ ບົນຜືນແຜ່ນດິນທີ່ອຸດົມສົມບູນ ມີຊັບໃນດິນສິນໃນນ້ຳ. ຊາດລາວ ຄົນລາວມີຈິດໃຈບໍລິສຸດຜຸດຜ່ອງກິງໄປກິງມາ. ແຕ່ພໍຕົກມາຮອດຍຸກສະໄຫມໃຫມ່ ຍ້ອນຄວາມຈະເລີນທາງດ້ານວິທະຍາສາດ ເຕັກໂນໂລຢີ ເຮັດໃຫ້ວັດຖຸທັນປຸ່ນຄຸນທາດຂອງຄົນ ໄປນຳຍຸກໃຫມ່ ຖືເງິນເປັນພະເຈົ້າ. ຊາຍຫນຸ່ມຍິງສາວທີ່ເຄີຍດຳລົງຊີວິດແບບບໍລິສຸດຜຸດຜ່ອງຢູ່ເຂດຊົນນະບົດບ້ານນາ ຕ່າງພາກັນຫລົງໄຫລໄປກັບແສງສີຄວາມຈະເລີນສີວິໄລຂອງຕົວເມືອງ ຫນີປະໄຮ່ນາຮົ້ວສວນ ແລະບ້ານເກີດເມືອງນອນ ເຂົ້າໄປສ່ຽງຊີວິດຫາກິນຢູ່ໃນເມືອງ ເຮັດໃຫ້ຊາວຫນຸ່ມຍິງສາວເຫລົ່ານັ້ນ ຖືກຕົວະຕົ້ມຫລອກຫລວງເສຍເນື້ອເສຍຕົວ ຕິດຢາບ້າ ອະນາຄົດມືດມົນ. ອີກຄວາມ

ຫມາຍຫນຶ່ງຂອງບົດກະວີ **"ງົວ ກັບ ກວຽນ "** ເມື່ອເຄື່ອງກົນຈັກໃຫມ່ທັນສະໄຫມ ໄດ້ເຂົ້າມາທົດແທນແຮງງານຂອງງົວ ງົວກວຽນກໍໄດ້ກາຍເປັນສິນຄ້າການຕະຫລາດ ສ່ວນກວຽນກໍກັບກາຍເປັນພິພິທະພັນວາງສະແດງຢູ່ຕາມສວນອຸທິຍານ ຫລື ກາຍເປັນຊາກກວຽນຮ້າງປະດັບເອ້ພັດທະຄານ ໂຮງແຮມ ຮ້ານອາຫານ ແລະ ຮ້ານບັນເທີງ... ເຫມືອນກັບຈິງໃຈຢາກຈະບອກວ່າ ວັນ ແລະ ເວລາງົວກັບກວຽນ ໄດ້ອາວະສານໄປແລ້ວ!

**ທອງໃບ ໂພທິສານ** ເປັນນັກປະພັນ ນັກກະວີຫນຸ່ມຮຸ່ນສືບທອດ ຍ້ອນມີພອນສະຫວັນ ແລະ ທຶນຮອນຊີວິດສະສົມມາຈາກການອ່ານ ການສັງເກດ ແລະ ຜ່ານປະສົບການຕົວຈິງໃນວຽກງານມາຫລາຍ ໃນທີ່ສຸດເຂົາກໍໄດ້ຄ່ອຍໆເດີນເລີກເຂົ້າສູ່ເສັ້ນທາງວັນນະກຳຂອງລາວ. ໃນໄລຍະຫນຶ່ງທົດສະວັດຜ່ານມານີ້, ໄດ້ປາກົດເຫັນບົດກະວີ ບົດປະພັນຮ້ອຍແກ້ວຂອງເຂົາອອກໃນບັນດາຫນັງສືພິມລາຍວັນ ແລະ ວາລະສານເກືອບທຸກສະບັບ ແລະ ມາເຖິງປັດຈຸບັນອີກຄັ້ງຫນຶ່ງ ທີ່ຜົນງານການຂຽນຂອງເຂົາໄດ້ຮັບການຈັດພິມເປັນເຫລັ້ມດັ່ງທີ່ທ່ານຜູ້ອ່ານເຫັນຢູ່ນີ້.

ບົດກະວີ **"ງົວ ກັບ ກວຽນ"** ໄດ້ຮັບຄະແນນສູງສຸດຈາກຄະນະກຳມະການຕັດສິນລາງວັນຊີໄຣຂອງລາວ ເຊິ່ງປະກອບດ້ວຍຕົວແທນຈາກຫລາຍໆພາກສ່ວນ. ການທີ່ **ທອງໃບ ໂພທິສານ** ໄດ້ຮັບການຄັດເລືອກໃຫ້ໄປຮັບລາງວັນຊີໄຣ ລາງວັນວັນນະກຳສ້າງສັນຍອດຢ້ຽມແຫ່ງອາຊຽນ ປະຈຳປີ 2004 ນີ້ ເຫັນວ່າຖືກຕ້ອງ ແລະ ເຫມາະສົມທີ່ສຸດ. ຄະນະກຳມະການໄດ້ຕັດສິນຢ່າງເປັນເອກະສັນ ດ້ວຍການໃຫ້ຄະແນນຢ່າງຖືກຕ້ອງ ບໍລິສຸດ ແລະ ເປັນທຳ ບໍ່ມີການລຳອຽງແຕ່

ຢ່າງໃດ. ບັນດາບົດກະວີທີ່ນັກກະວີສົ່ງເຂົ້າຮ່ວມການແຂ່ງຂັນໃນປີນີ້ ລ້ວນແຕ່ດີເດັ່ນເກືອບທຸກບົດ ແຕ່ບົດກະວີ **"ງິ້ວ ກັບ ກວຽນ"** ຂອງ **ທອງໃບ ໂພທິສານ** ມີອັນເດັ່ນລື່ນຫມູ່ທັງທາງດ້ານເນື້ອໃນ ແລະ ສິລະປະການປະພັນ ຈຶ່ງຊະນະເລີດ ແລະ ໄດ້ເປັນນັກກະວີຊີໄຣຂອງລາວປະຈໍາປີນີ້. ສ່ວນບັນດາທ່ານທີ່ຕົກຮອບໄປນັ້ນ ກໍບໍ່ຄວນເສຍກໍາລັງໃຈ ເພາະລາງວັນຊີໄຣ ຍັງມີຕ້ອນຮັບນັກປະພັນ ແລະ ນັກກະວີເຂົ້າແຂ່ງຂັນເປັນປະຈໍາທຸກໆປີ.

ໂອກາດນີ້, ໃນນາມສະມາຄົມນັກປະພັນລາວ ແລະ ຕາງຫນ້າໃຫ້ນັກປະພັນ ນັກກະວີລາວທົ່ວປະເທດ ຂ້າພະເຈົ້າຂໍສະແດງຄວາມຊົມເຊີຍ **ທອງໃບ ໂພທິສານ** ທີ່ໄດ້ຮັບລາງວັນຊີໄຣປະຈໍາປີ 2004.

ນະຄອນຫລວງວຽງຈັນ, ວັນທີ 9 ກໍລະກົດ 2004

**ປະທານສະມາຄົມນັກປະພັນລາວ**

**ຈັນທີ ເດືອນສະຫວັນ**

# ຄຳເຫັນ
## ຄະນະກຳມະການຕັດສິນລາງວັນຊີໄຣຂອງລາວ

ໂຮມກະວີຊຸດ : "ກະວີບ້ານນາ" ຂອງກຸຫລາບສະຫວັນ ມີເນື້ອໃນສ່ອງແສງໃຫ້ເຫັນສະພາບຄວາມງົດງາມທາງດ້ານຊີວິດ ວັດທະນະທຳ ແລະ ສັງຄົມລາວ ທີ່ເຄີຍມີມູນເຊື້ອມາແຕ່ສະໄຫມບູຮານ. ຈາກການປ່ຽນແປງຢ່າງບໍ່ສາມາດຈະຫລີກລ້ຽງໄດ້ ຂອງທ້ອງຖິ່ນດິນນາ ທີ່ເກີດຂຶ້ນຕົວຈິງ ພ້ອມກັບການພັດທະນາຂອງຍຸກໃຫມ່ ແມ່ນແຕ່ຂອງທີ່ເຄີຍຢູ່ຄູ່ຄຽງ ແລະ ຜູກພັນກັນຢ່າງສະຫນິດແຫນ້ນມາຕັ້ງແຕ່ເກົ່າກ່ອນ ກໍຍັງຖືກກະແສນິຍົມໃຫມ່ຜັນແຍກອອກຈາກກັນໄປຄົນລະແຫ່ງຫົນ ປະປ່ອຍໃຫ້ຜູ້ຢູ່ເບື້ອງຫລັງໄດ້ແຕ່ໂອ້ອ່າວຄະນຶງຫາອາໄລອາວອນ ເຖິງເລື່ອງລາວຂອງຊີວິດ ແລະ ຄວາມຮັກທີ່ເຄີຍມີມາ ບັດນີ້ຄົງຫລົງເຫລືອໄວ້ພຽງຮ່ອງຮອຍ ແລະ ຮູບພາບແຫ່ງຄວາມຊົງຈຳໃນອະດີດ.

ຜົນງານ "ກະວີບ້ານນາ" ຂອງກຸຫລາບສະຫວັນທັງຫມົດໃນຊຸດນີ້ ເຄີຍໄດ້ຮັບການພິມເຜີຍແຜ່ຄັ້ງແຮກໃນວັນນະສິນ (ວາລະສານວັນນະຄະດີລາວ) ໃນລະຫວ່າງປີ 1994 - 2001 ແລະ ໄດ້ຮັບລາງວັນຊີໄຣ ລາງວັນວັນນະກຳສ້າງສັນຍອດຢ້ຽມແຫ່ງອາຊຽນ ປະຈຳປີ 2004 ດ້ວຍບົດກະວີ "ງົວ ກັບ ກວຽນ" ທີ່ໂຮມຢູ່ໃນຊຸດ "ກະວີບ້ານນາ" ຊຸດນີ້. ຈຸດເດັ່ນຂອງບົດກະວີ "ງົວ ກັບ ກວຽນ" ຢູ່ທີ່ການພັນລະນາຮູບພາບຕົວຈິງດ້ວຍສັບສຳນວນພາສາ ກະວີທີ່ງ່າຍດາຍຈົນເກືອບຈະເວົ້າໄດ້ວ່າເປັນບົດກະວີທຳມະດາໆ. ແຕ່ໃນຄວາມງ່າຍ

ດາຍນັ້ນ ພັດເຕັມປຸ່ມໄປດ້ວຍເນື້ອໃນອັນເລິກເຊິ່ງ ທີ່ນັກກະວີຈົງໃຈເຊື່ອງຊ້ອນເອົາໄວ້. ຕົວລະຄອນເອກ ງິວ ກັບ ກວຽນ ໂຮມກັນເປັນໜຶ່ງ ຄືພາຫະນະອັນສຳຄັນ ຕິດພັນກັບຊີວິດຈິດໃຈຂອງຄົນຊົນນະບົດ ບ້ານໄຮ່ບ້ານນາມາແຕ່ສະໄໝກ່ອນໆ ມາດຽວນີ້ ກົງກວຽນທີ່ໂດຍທຳມະຊາດ ຈະເຄື່ອນຄ້ອຍຕາມກົ້ນງົວທີ່ເປັນຂອງຄູ່ກັນຖືກຊຸກດຶງໃຫ້ລ່ວງລ້ຳເຂົ້າໄປເອ້ອວດໂສມ ປະດັບປະດາດ້ວຍໄຟແສງສີສ່ວນງົວກັບຖືກຫລົງລືມ ບໍ່ມີໃຜໃສ່ໃຈເລີຍພໍດີ້. ມັນບໍ່ຕ່າງຫຍັງກັບເນື້ອໃນຂອງບົດກະວີທີ່ກ້າວລ້ຳນຳໜ້າດ້ານສັບສຳນວນ ແລະ ສິລະປະໃນການປະພັນໄປຈົນຜູ້ອ່ານແທບລືມໃສ່ໃຈ. ຫາກເມື່ອໄດ້ພິຈາລະນາຖີ່ຖ້ວນແລ້ວ ກໍຈະເຫັນແຈ້ງ ແລະ ຮູ້ຊຶ້ງວ່າ ຄວາມງ່າຍດາຍ ແລະ ບອບບາງຄືຊີວິດວັດທະນະທຳສັງຄົມລາວ ເປັນສິ່ງທີ່ຄວນເອົາໃຈໃສ່ອະນຸລັກຮັກສາຢ່າງຍິ່ງ.

ດ້ວຍຄຸນສົມບັດດັ່ງກ່າວຂ້າງເທິງນັ້ນ ບົດກະວີ " ງົວ ກັບ ກວຽນ" ໃນໂຮມຊຸດ "ກະວີ ບ້ານນາ" ຂອງກຸຫລາບສະຫວັນ ຈຶ່ງມີຄວາມດີເດັ່ນ ແລະ ເຫັນສົມຄວນແກ່ການຍົກຍ້ອງໃຫ້ເປັນວັນນະກຳສ້າງສັນຍອດຢ້ຽມແຫ່ງອາຊຽນ ຫລື S.E.A. Write ປະຈຳປີ 2004.

ປະທານຄະນະກຳມະການຕັດສິນ

ວິເສດ ສະແຫວງສຶກສາ

# ຄໍາເຫັນ

## ດຣ. ທອງຄໍາ ອ່ອນມະນີສອນ
## ນັກກະວີຊີໄຣ ຜູ້ທໍາອິດຂອງລາວ ປະຈໍາປີ 1998

"ຄົມປາກກາ ໄຟປັນຍາ ພະລັງວິຊາການ ຄວາມສະຫລາດກ້າຫານ ແລະ ແຮງອຸທິດເສຍສະຫລະ ແມ່ນປະກາສິດມະຫັດສະຈັນ ຂອງນັກປະພັນ ແລະ ນັກກະວີ ຜູ້ປະດິດແຕ່ງສ້າງສັນ ວັນນະກໍາ ແລະ ວັດທະນະທໍາທາງໃຈ ທີ່ອະມະຕະຝາກໄວ້ປະດັບແຜ່ນດິນ" ທອງໃບ ໂພທິສານ ກໍເປັນຜູ້ຫນຶ່ງທີ່ໄດ້ສ້າງຕໍານານວັນນະກໍາຊີໄຣ ພາຍໃຕ້ແສງສະຫວ່າງແຫ່ງຄຸນສົມບັດທາງໃຈ ອັນຊົງຄຸນຄ່າດັ່ງກ່າວມານີ້.

ຂ້າພະເຈົ້າຮູ້ສຶກພາກພູມໃຈ ແລະ ຖືເປັນກຽດຢ່າງສູງ ທີ່ໄດ້ຮັບຄວາມເຊື່ອຖື ແລະ ໄວ້ວາງໃຈ ໃຫ້ປະກອບຄໍາເຫັນກ່ຽວກັບປຶ້ມຊຸດໂຮມ "ກະວີບ້ານນາ" ຂອງ ທອງໃບ ໂພທິສານ ເຊິ່ງໃນນັ້ນ ບົດກະວີ ທີ່ໃສ່ຫົວຂໍ້ວ່າ : "ງົວ ກັບ ກວຽນ" ໄດ້ກາຍເປັນບົດທີ່ມີຄຸນຄ່າສູງເດັ່ນ, ຊະນະໃຈກໍາມະການ, ຖືກຄັດເລືອກ ແລະ ຕັດສິນໃຫ້ເປັນບົດກະວີ ລາງວັນຊີໄຣ ລາງວັນວັນນະກໍາສ້າງສັນຍອດຢ້ຽມແຫ່ງອາຊຽນ ປະຈໍາປີ 2004.

ທອງໃບ ໂພທິສານ ເປັນນັກປະພັນ ນັກກະວີ ປັນຍາຊົນຜູ້ຫນຸ່ມແຫນ້ນ ເປັນຕົວແທນຂອງຄົນລາວຍຸກໃຫມ່ຜູ້ຫນຶ່ງ, ມີສະຕິປັນຍາສະຫລາດສະຫລຽວ ແຫລມຄົມ, ມີພອນສະຫວັນ ປະດິດແຕ່ງສ້າງສັນວັນນະກຳດີເດັ່ນ ທັງກາບກອນ ແລະ ເລື່ອງສັ້ນ. ເປັນຄົນຫ້າວຫັນ ດຸຫມັ່ນ ຂະຫຍັນພຽນ ອົດທົນສູ້ຊົນ, ມີຫົວຄິດປະດິດສ້າງ, ຮັກຄວາມກ້າວຫນ້າ, ເວົ້າແທ້ເຮັດຈິງ ແລະ ເວົ້າຈິງເຮັດແທ້. ມີນ້ຳໃຈກວ້າງຂວາງເພື່ອແຜ່, ມີອາລົມສຸນທະລີ, ໃນສິລະປະ ມິດໄມຕີ ແລະ ມະນຸດສຳພັນທີ່ດີ, ມີວິໄສທັດ ເບິ່ງກວ້າງແນມການໄກ, ກ້າຫານຕໍ່ສູ້ກັບອຸປະສັກ, ຫນັກແຫນ້ນໃນທັດສະນະຫລັກຫມັ້ນ ຕ້ານຢັນຝ່າຟັນ ກັບບັນຫາສິ່ງຫຍໍ້ທໍ້ຕ່າງໆ ທີ່ເກີດກັ້ນຕັນທາງ ຫລື ເກີດຫນີບຫນ່ວງຫນ່ຽວ ຢ່າງບໍ່ຫວັ່ນໄຫວ. ເຂົາມີລົມຫາຍໃຈ ເມັດເຫື່ອ ແລະ ຢາດເລືອດ ເພື່ອປະເທດຊາດ. ເຂົາອຸທິດທຸກຄວາມສາມາດ ແລະ ຍິນມອບຄວາມສະຫລຽວສະຫລາດເພື່ອແຜ່ນດິນ. ກິ່ນຫອມຂອງຜົນງານອັນມີຄຸນຄ່າຫລາຍໆ ດ້ານຂອງເຂົາ ກຳລັງຂະຈອນ ກະຈາຍໄປ ໃນວົງການວັດທະນະທຳ ແລະເວທີວັນນະກຳ ແຫ່ງຍຸກສະໄຫມຢ່າງກວ້າງຂວາງ.

ປຶ້ມ "ກະວີບ້ານນາ" ແມ່ນສົມບັດທາງປັນຍາ ທີ່ເຂົາຫອມຮັກ ແລະ ຫວງແຫນທີ່ສຸດ ເພາະມັນໄດ້ຖືກປະພັນຂຶ້ນຢ່າງທະນຸຖະຫນອມ ຈາກແກ່ນຫມາກຫົວໃຈ ທີ່ເອີບອີ່ມສະອື້ນສະອອນໃນສຸນທະລີຍະພາບຂອງຜືນແຜ່ນດິນທີ່ອຸດົມສົມບູນ ແລະ ຄວາມຮັກຊາດອັນດູດດື່ມລ້ຳເລີກ ເຊິ່ງສະແດງອອກດ້ວຍຄົມກະວີ ສີວາຈາ ແລະ ສະທ້ອນທັດສະນະມະຫາຊົນຢ່າງໂດດເດັ່ນດັ່ງນີ້ :

- ເຂົາຫວງຮັກມົນສະເຫນແຫ່ງຊົນນະບົດ, ຮັກສິ່ງແວດລ້ອມ

ແລະ ຄວາມສວຍສົດງົດງາມຂອງທຳມະຊາດ, ຮັກຮີດຄອງປະເພນີ ແລະ ວັດທະນະທຳອັນດີງາມຂອງຊາດ ທີ່ຍັງບໍລິສຸດສົດໃສຢູ່, ຮັກນ້ຳໃຈອັນສະອາດສ່ອງໃສ ສັດຊື່ ເອື້ອເຟື້ອ ເພື່ອແຜ່ ເມດຕາປານີ ທີ່ເປັນເອກະລັກຂອງຄວາມເປັນຊາດລາວ ຄົນລາວກໍຄືຂອງຊາວຊົນນະບົດ.

- ເຂົາຮັກພໍ່ແມ່ປະຊາຊົນ ຄົນອອກແຮງງານຜູ້ດຸໝັ່ນຂະຫຍັນພຽນ ຈິງໃຈ ບໍ່ມີລັບລົມຄົມໃນ. ຟ້າກໍທົນຝົນກໍບໍ່ຢ້ານ ຕ້ານໄພອຶດຫິວ ເພື່ອໃຫ້ຫລຸດພົ້ນອອກຈາກແອກຄອບຄອງຂອງຄວາມທຸກຍາກ. ເຖິງລຳບາກຍາກຊາ ກໍກ້າຫານທ້າທາຍຕໍ່ສູ້ກັບຊາຕາກຳ ເພື່ອສ້າງຢູ່ທຳກິນອາບເຫື່ອ ເພື່ອອະນາຄົດ ແລະ ຄວາມສຸກຂອງລູກຫລານ ເອົາສອງຝາມືຈົກຂີ້ດິນງົມກ້ອນຫີນປູກປັ້ນຜືນແຜ່ນດິນໃຫ້ເປັນທົ່ງສີຂຽວ ເປັນເຂົ້າປາອາຫານລ້ຽງສັງຄົມ.

- ເຂົາເປັນຫ່ວງເປັນໃຍ ເສົ້າສະຫລົດ ແລະ ໂສກສະເທືອນນຳຊີວິດ ແລະ ອະນາຄົດຂອງເຍົາວະຊົນ ຊາວໜຸ່ມບ່າວສາວໄວຄະນອງ ຜູ້ດ້ອຍໂອກາດໃນການສຶກສາ ທີ່ຕ້ອງຖືກດູດດຶງຍົວະເຍົ້າຫລອກລໍ້ ແລະ ຫລອກລວງດ້ວຍແສງສີແຫ່ງຄວາມຈະເລີນ ແລະ ອຳນາດເງິນຕາ ໃຫ້ຫລັ່ງໄຫລເຂົ້າມາຫາກິນຢູ່ນະຄອນຫລວງ. ມີນາງສາວຜູ້ບໍລິສຸດບໍ່ແມ່ນຈຳນວນນ້ອຍ ທີ່ໄດ້ກາຍເປັນເຫຍື່ອ ແລະ ທາດບຳລຸງບຳເລີ ປ່ຽນປ້ອນທາງກາມາລົມໃຫ້ພວກກຸ່ມຄົນ ທີ່ຫາຍໃຈເປັນເງິນເປັນຄຳ ແລະ ກະຫາຍຫິວໃນຕັນຫາ ໄລ່ລ່າພົມມະຈາລີ ແຫ່ງສັງຄົມບໍລິໂພກ ຂອງຍຸກໂລກາພິວັດ.

ນອກຈາກນີ້ ນັກກະວີຊີໄຣ ທອງໃບ ໂພທິສານ ຍັງສະທ້ອນພາບຈາກສ່ວນເລິກຂອງຄວາມຂົມຂື່ນລະທົມໃຈໃນສະພາບຕົວ

ຈຶ່ງທີ່ວ່າ ບ່າວສາວຊາວໜຸ່ມ, ໜີຈາກທ້ອງທົ່ງນາ ອູ່ເຂົ້າອູ່ປາປ່ອຍປະຖິ້ມກຳເນີດໃຫ້ຫວ່າງເປົ່າເຫງົາຫງອຍ. ຫລາຍຄອບຄົວບໍ່ໄດ້ທຳການຜະລິດ ຍ້ອນຂາດກຳລັງແຮງງານຊາວໜຸ່ມ ຄົນເຖົ້າຄົນແກ່ຕ້ອງນັ່ງເສົ້າເຝົ້າເຮືອນ ເໝືອນດັ່ງວ່າຈົມຢູ່ໃນຄວາມສິ້ນຫວັງ ໄດ້ແຕ່ຕັ້ງໜ້າຄອງຄອຍເງິນຄຳຈາກລູກຫລານຜູ້ໄປຫາວຽກເຮັດງານທຳຢູ່ໃນເມືອງໃຫຍ່ໆ ພໍປານໄກ່ຄອຍເຂົ້າສານ. ການເວລາພົ້ນຜ່ານໄປເມື່ອແຜ່ນດິນບໍ່ມີຄົນໄຖ ໄຮ່ນາບໍ່ມີຄົນເຮັດ ເຂົ້າກໍບໍ່ມາ ເງິນກໍບໍ່ມີໜີ້ສິນກໍມັດຄໍ ບັນຫາຫຍໍ້ທໍ້ຕ່າງໆ ກໍຍ່າງເຂົ້າຫາ ພະຍາດໂລຄາກໍບຽດບຽນ ຄວາມເຈັບປວດລະທົມໃຈ ກໍເອົາໄມ້ແສ້ຫວາຍມາຂ້ຽນກາງຫລັງ ຍັງເຫລືອແຕ່ຕົວຄວາມີໃສ່ກວຽນເອົາໄປຂາຍ ງົວຄວາຍທີ່ມີກໍໜີໄປຕາຍຢູ່ໂຮງຂ້າສັດ ຕັດສິນໃຈຂາຍສວນຂາຍນາ ບາດແລ້ວຈະຫາທີ່ຢູ່ບ່ອນອາໄສໃນຍາມເຖົ້າແກ່ຊະລາກໍບໍ່ມີ...

ທັງໝົດນີ້ ຄືທີ່ມາຂອງສາເຫດ ແລະ ບັນຫາທີ່ຜູ້ປະພັນ "ກະວີບ້ານນາ" ເຫັນ ແລະ ຕັ້ງຂຶ້ນ ເພື່ອຊອກທາງອອກອັນນິ້ມນວນເໝາະສົມ ດ້ວຍສິລະປະ ລີລາກະວີນິພົນ ໃນຮູບຊົງສີສັນແບບສະບັບກອນອັກສອນສັງວາດ ທີ່ມ່ວນອອນຊອນສະທ້ອນອາລົມຄົມຄະຕິ, ຕຳໜິແນວຄິດ, ປະດິດສ້າງວັດທະນະທຳທາງໃຈເອີ້ນຮຽກຊັກຊວນອອນແອ່ວໃຫ້ຄົນລາວຍຸກໃໝ່ໄວໜຸ່ມຊຸມບ່າວສາວໄດ້ຄິດໄດ້ສຳນຶກໃນຄວາມຈິງ ແລະ ເຫດຜົນເພື່ອຟື້ນສະຕິຕື່ນຕົວຫັນໜ້າກັບຄືນບ້ານນາ ຕັດສິນໃຈສ້າງສາພັດທະນາ ທ້ອງຖິ່ນຊົນນະບົດ ແບບປະສົມປະສານແຮງງານຄົນແຮງງານສັດ ແລະ ພາຫະນະລາກແກ່, ວັດຖຸເຕັກນິກທັນສະໄໝ ທ່າແຮງອັນອຸດົມສົມບູນຮັ່ງມີຂອງທຳມະຊາດ ບວກໃສ່ພູມປັນຍາ ແລະ ຄວາມສະຫລາດສະຫລຽວຂອງ

ປວງປະຊາຊາວບ້ານ, ບຸກບືນກ້າຫານສ້າງໃຫ້ຊົນນະບົດ ມີໃບໜ້າໃໝ່ ມີຢູ່ມີກິນ ມີສິນຄ້າກະສິກຳສົ່ງຂາຍ ແລະ ບໍ່ຈຳເປັນຕ້ອງຂາຍງົວຂາຍກວຽນ ຮື້ວສວນໄຮ່ນາຄືດັ່ງທີ່ຜ່ານມາອີກຕໍ່ໄປ. ຂໍມ້ວນທ້າຍດ້ວຍທັດສະນະສ່ວນຕົວຕື່ມອີກວ່າ :

"ເມື່ອວັດທະນະທຳທາງໃຈ ແນວຄິດອັນບໍລິສຸດໂປ່ງໃສຖືກປຸ້ນຈີ້ ລອບລັກຖືກເຊາະເຈື່ອນກັດແຫ້ນກືນກິນໃຫ້ກິວກຸດ ຂາດຫ້ຽນເສື່ອມສະຫລາຍໄປແຕ່ລະມື້ແລ້ວ ເອກະລັກຂອງຄວາມເປັນຊາດລາວ ຄົນລາວຜູ້ມີວັດທະນະທຳ ແລະ ຄວາມສີວິໄລທາງຈິດໃຈ ບໍ່ວ່າຢູ່ໃນເມືອງຫລວງ ຫລື ຢູ່ຊົນນະບົດກໍຈະທະຍອຍຫ່ຽວແຫ້ງຕອມຕາຍໄປຕາມໆກັນມື້ລະເລັກມື້ລະໜ້ອຍ ຢ່າງບໍ່ຕ້ອງສົງໄສ. ຂໍໃຫ້ວັນນະກຳສ້າງສັນ ດີເດັ່ນ ແລະ ຍອດຢ້ຽມທັງຫລາຍໂດຍສະເພາະກະວີບ້ານນານີ້ ໄດ້ມີໂອກາດສົ່ງປະກາຍຖ່າຍທອດແສງໄຟ ໃຫ້ພະລັງແຮງຊ່ວຍຕ້ານຢັນ, ສ້າງຄູຄັນກັນຕາຝັ່ງເຈື່ອນຄ້ຳເຮືອນເພບໍ່ໃຫ້ວັດທຳນະທຳທາງໃຈຊຸດໂຊມໂຊເຊຊອກຊ້ຳຊູບຊີດເສຍສັນສິທນີຊາດໜີແຜ່ນດິນອີກຕໍ່ໄປນຳເພິ່ນແດ່ທ້ອນ!"

ວຽງຈັນ, ວັນທີ 14 ກໍລະກົດ 2004

ດຣ. ທອງຄຳ ອ່ອນມະນີສອນ



ແດ່... ບ້ານນາ
ດ້ວຍແຮງຮັກ ແລະ ສັດທາ
ດ້ວຍພາສາ ປາຍປາກກາ ອາລົມ ຄົມກະວີ

ເມື່ອໄດ້ມາເຖິງຈຸດນີ້ ຂ້າພະເຈົ້າຈຶ່ງຮູ້ສຶກວ່າ ຊີວິດທີ່ແສນຈະລຳບາກກາກກຳໃນໄວເດັກຢູ່ບ້ານນາປ່າເຂົາ ຕື່ນເຊົ້າມາຮູ້ແຕ່ເຂົ້າປ່າລັ້ງງົວລັ້ງຄວາຍ ລູຍຂີ້ຕົມ ງົມກະປູຢູ່ນຳທົ່ງໄຮ່ທົ່ງນາຕາມປະສາເດັກບ້ານນອກບ້ານນາ... ໄດ້ກາຍມາເປັນທຶນຮອນຊີວິດທີ່ສຸດແສນລ້ຳເລີດປະເສີດຄ່າ ໃຫ້ປັນຍາ ໃຫ້ຄວາມຄິດ ຄວາມຮູ້ສຶກ ອາລົມຈິດ ແລະ ແນວຄວາມຄິດທີ່ອ່ອນໄຫວສວຍງາມ ອັນເປັນທີ່ມາຂອງ **ກະວີ** ແລະ **ບ້ານນາ** ໃນຊຸດນີ້.

ດ້ວຍ **"ກະວີບ້ານນາ"** ຂ້າພະເຈົ້າຈິງໃຈຢາກໃຫ້ເປັນອຸທາຫອນສອນໃຈ ເປັນຂໍ້ຄິດ ແລະ ເປັນມູມມອງໃນການສະທ້ອນໃຫ້ເຫັນຮູບພາບທີ່ສວຍງາມ ແລະ ງຽບສະຫງົບແຫ່ງບ້ານນາ ຜືນດິນຖິ່ນກຳເນີດຂອງຊີວິດ ພູມປັນຍາ ຜືນນາ ແລະ ປ່າເຂົາ ກົກເຄົ້າເຫງົ້າກໍແຫ່ງສິລະປະ ວັດທະນະທຳ ແລະ ຮີດຄອງປະເພນີທີ່ງົດງາມລ້ຳຄ່າ... ແຕ່ກໍເປັນໜ້າເສຍດາຍ ມາເຖິງທຸກວັນນີ້ ຢາກຫລືບໍ່ຢາກ ມັກ ຫລື ບໍ່ມັກ ແຕ່ກໍຕ້ອງຍອມຮັບວ່າ ຮູບພາບທີ່ງົດງາມ ຄວາມບໍລິສຸດໂສພາແຫ່ງບ້ານນາໃນເມື່ອກ່ອນນັ້ນ ມັນໄດ້ກັບກາຍເປັນອະດີດທີ່ນັບມື້ຈະຖືກຫລົງລືມ ບໍ່ໃຫ້ເຫລືອແມ່ນແຕ່ຄວາມຊົງຈຳ ແລະ ຄວາມດີງາມທີ່ເຄີຍມີມາ. ຫລາຍສິ່ງຫລາຍຢ່າງກໍໄດ້ສູນເສຍໄປຕະຫລອດການ ແລະ ກໍບໍ່ອາດສາມາດຈະຮຽກຮ້ອງມັນໃຫ້ກັບຄືນມາສູ່ຊີວິດຈິດໃຈ ແລະ ຄວາມເປັນຈິງບົນຜືນແຜ່ນແດນບ້ານນາ

# ຂໍໂທດຫຼາຍໆ



ປື້ມຫົວດັ່ງກ່າວ ຍັງບໍ່ສາມາດນຳ
ມາເຜີຍແຜ່ໄດ້ ເນື່ອງຈາກຍັງບໍ່
ໄດ້ຮັບການອະນຸຍາດໃຫ້ເຜີຍແຜ່
ໄດ້ຢ່າງເປັນທາງການເທື່ອ...

ດ້ວຍຄວາມຮັກແພງ